ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ສະຖາບັນຄົ້ນຄ້ວາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

0529

ເລກທີ 0529 /ສກປພ

ນະຄອນຫຼວງວຽງຈັນ,ວັນທີ...21 APR 2026...

## ໜັງສືເຊີນ ເຂົ້າຮ່ວມແຂ່ງຂັນປະມູນ

- ອີງຕາມຂໍ້ຕົກລົງຂອງທ່ານລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 0592/ກສ, ລົງວັນທີ 13/02/2026, ວ່າດ້ວຍ ການມອບໂຄງການ ກໍ່ສ້າງຮົ້ວ-ກຳແພງສູນຄົ້ນຄວ້າການລ້ຽງສັດ ແລະ ສູນຄົ້ນຄວ້າການປະມົງໃຫ້ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດໂຄງການ.

1. ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ໄດ້ຮັບອະນຸມັດງົບປະມານແຫ່ງລັດປະຈຳປີ 2026 ຂອງ ໂຄງການ ກໍ່ສ້າງຮົ້ວ-ກຳແພງສູນຄົ້ນຄວ້າການລ້ຽງສັດ ແລະ ສູນຄົ້ນຄວ້າການປະມົງ ການປະມູນເປີດກ້ວາງພາຍໃນ
2. ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄວາມເໝາະສົມ ເຂົ້າຍື່ນຊອງປະມູນ ສຳ ລັບໂຄງການດັ່ງກ່າວ ແມ່ນຢູ່ ບ້ານໜອງວຽງຄຳ (ຕໍ່ໜ້າບ້ານພັກຊີເກມ) ເມືອງໄຊທານີ ນະຄອນ ຫລວງວຽງຈັນ ໃນໄລຍະຂັ້ນຕອນການກໍ່ສ້າງແມ່ນໃຫ້ທາງບໍລິສັດຜູ້ເຂົ້າຮ່ວມປະມູນເປັນຜູ້ກຳນົດມາ.
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນວົງເປີດກວ້າງພາຍໃນ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍການຈັດຊື້-ຈັດຈ້າງ ດ້ວຍທຶນ ຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ບົດແນະນຳກ່ຽວກັບການຈັດຕັ້ງປະຕິ ບັດກົດໝາຍວ່າ ດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບດັດແກ້ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດ ໝາຍ ທີ່ກ່ຽວພັນກັບ ວຽກທີ່ຈະດຳເນີນການຈັດຊື້ສິນຄ້າ (ປະຕັງຊັ້ນ 1) ຢູ່ໃນຂອບເຂດທົ່ວປະເທດ.
5. ບໍລິສັດທີ່ມີຄວາມເໝາະສົມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາ ຊົນນະບົດ (ຕໍ່ໜ້າກັບບ້ານພັກ ຊີເກມ) ຫລື ຕິດຕໍ່ໂດຍກົງຫາ ທ່ານ ນ. ອຸດທະວີວອນ ບຸນທະຄຳ ແລະ ນ. ພັດສະນີ ພຸດທະວົງ ໂທລະສັບ 020 55117581, 020 97191441 ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສະຖາບັນ ຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຫ້ອງປະຊຸມສຳນັກສະຖາ ບັນ ແຕ່ມື້ແຈ້ງການເປັນຕົ້ນໄປໃນໂມງ ລັດຖະການ.

6.ບໍລິສັດໃດທີ່ຕ້ອງການຊື້ເອກະສານປະມູນຄົບຊຸດຕ້ອງຍື່ນໜັງສືສະເໜີຫາ(ທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ວັນທີ 27/04/2026. ໂດຍຕ້ອງຈ່າຍຄ່າ ທຳນຽມຊອງປະມູນໃນລາຄາ 2.000.000 ກີບ ຕໍ່ 1 ຊອງ ຕ້ອງຈ່າຍເປັນ (ເງິນສົດ).

7. ຊອງປະມູນຕ້ອງສົ່ງຕາມທີ່ກຳນົດໄວ້ດັ່ງນີ້: ໃນເວລາ10:00ໂມງຂອງວັນທີ 05/06/2026 ຊອງປະມູນໃດທີ່ສົ່ງຊ້າກວ່າ ເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາຊອງ ແລະ ບໍ່ມີການພິຈະລະນາ.ຊອງປະມູນທຸກໆຊອງຈະເປີດໃນເວລາ 10 ໂມງ 00 ຂອງວັນທີ 05/06/ 2026 ທີ່ຫ້ອງປະຊຸມ ສຳນັກ ສະຖາບັນ ຄົ້ນຄ້ວາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ (ຕໍ່ ໜ້າບ້ານພັກຊີເກມ), ບ້ານໜອງວຽງຄຳ, ເມືອງ:ໄຊທານີ, ນະຄອນ ຫຼວງວຽງຈັນ. ໂດຍຊ້ອງໜ້າຄະນະກຳມະການ ປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.
8. ເອກະສານປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນມາພ້ອມໃນມູນຄ່າ (ບໍ່ໃຫ້ຫລຸດ 2% ຂອງລາຄາ ປະມູນ). ໜັງສືຄ້ຳປະກັນການ ປະມູນຕ້ອງແມ່ນໜັງສືຄ້ຳປະກັນຂອງທະນາຄານ ທີ່ຖືກຕ້ອງກັບແບບຟອມທີ່ໄດ້ກຳນົດ ໄວ້ຢູ່ໃນເອກະ ສານປະມູນ. ໝາຍເຫດ:ຖ້າກໍລະນີມີການປ່ຽນແປງໃນມື້ເປີດຊອງປະມູນທາງຄະນະຮັບຜິດຊອບຈະໄດ້ ແຈ້ງໃຫ້ບໍລິສັດຕື່ມຕາມພາຍຫລັງ.

ຫົວໜ້າສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ປອ. ເພັດບະນີແສງ ຊ້າງໄຊຍະສານ

สแกนด้วย CamScanner